ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 2842/ຮສສ

ນະຄອນຫຼວງວຽງຈັນ, ວັນທີ 8/ 8 / 2008

**ຄຳແນະນຳ**

**ການຈັດຕັ້ງປະຕິບັດ ດຳລັດ 343/ນຍ**

**ວ່າດ້ວຍການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ**

**ຄຸນງາມຄວາມດີໃນພາລະກິດ ຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ**

- ອີງຕາມດຳລັດ ວ່າດ້ວຍການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ສະບັບເລກທີ 343/ນຍ, ລົງວັນທີ 25/9/2007.
- ເພື່ອເປັນເອກະພາບ ແລະ ເຂົ້າໃຈຕໍ່ເນື້ອໃນ, ວິທີການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີໃນຂອບເຂດທົ່ວປະເທດ.

ລັດຖະມົນຕີ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຄຳແນະນຳ :**

I. **<u>ວ່າດ້ວຍເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍ.</u>**

ເປົ້າໝາຍຜູ້ທີ່ຈະໄດ້ຮັບການປະຕິບັດນະໂຍບາຍ ຕາມດຳລັດ 343/ນຍ, ລົງວັນທີ 25/09/2007 ມີຄື:

1. ພະນັກງານປະຕິວັດອາວຸໂສ, ທີ່ເຂົ້າການປະຕິວັດແຕ່ປີ 1954 ຄືນຫຼັງ ທີ່ແມ່ນພະນັກງານບຳນານ ຫລື ຜູ້ທີ່ເຮັດການປະຕິວັດຕໍ່ເນື່ອງເຊິ່ງມີອາຍຸການປະຕິວັດແຕ່10 ປີຂຶ້ນໄປ ທີ່ບໍ່ຖືກປະຕິບັດວິໄນ ແລະ ບໍ່ປະລະໜ້າທີ່.
2. ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ຜູ້ເສຍອົງຄະພິເສດ ຍ້ອນການສູ້ຮົບ ຫລື ຮັບໃຊ້ການສູ້ຮົບ ໃນພາລະກິດ ການປະຕິວັດຊາດ ປະຊາທິປະໄຕ.
3. ຜູ້ເສຍສະຫລະຊີວິດໃນການສູ້ຮົບແລະຮັບໃຊ້ການສູ້ຮົບໃນພາລະກິດການປະຕິວັດຊາດປະຊາທິປະໄຕ ທີ່ເຂົ້າການນັບແຕ່ປີ 1975 ຄືນຫລັງ ທີ່ບໍ່ທັນໄດ້ຮັບເງິນອຸດໜູນ.
4. ຜູ້ເສຍອົງຄະໃນການສູ້ຮົບແລະຮັບໃຊ້ການສູ້ຮົບໃນພາລະກິດການປະຕິວັດຊາດປະຊາທິປະໄຕ,ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ພະນັກງານ ຜູ້ເສຍອົງຄະ ທີ່ເຂົ້າການປະຕິວັດແຕ່ປີ 1975 ຄືນຫຼັງ.
5. ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ຜູ້ຍັງມີຊີວິດ ທີ່ເຂົ້າການປະຕິວັດແຕ່ປີ 1975 ຄືນຫລັງ ທີ່ບໍ່ມີເງື່ອນໄຂໄດ້ຮັບບຳນານຄືນ.
6. ພໍ່ ແມ່ ທີ່ມີລູກເສຍສະຫຼະຊີວິດໝົດ ໃນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບຊຶ່ງພໍ່ແມ່ຍັງມີຊີວິດແຕ່ຂາດຜູ້ເບິ່ງແຍງລ້ຽງດູ.
7. ພະນັກງານຮາກຖານການເມືອງເຊັ່ນ: ຄະນະຕາແສງ, ຄະນະແນວລາວຮັກຊາດ, ກອງຫຼອນ ທີ່ໄດ້ ສູ້ຮົບ

ຫຼື ຮັບໃຊ້ການສູ້ຮົບໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ແຕ່ປີ 1975 ຄືນຫຼັງ ທີ່ມີອາຍຸການແຕ່ 10 ປີ ຂຶ້ນໄປທີ່ ບໍ່ຖືກປະຕິບັດວິໃນ, ບໍ່ປະລະໜ້າທີ່ ແລະ ບໍ່ທໍລະຍົດຕໍ່ຊາດ.

II. <u>ການທັນສິດນຳໃຊ້ທີ່ດິນ, ເຮືອນ, ທຶນສົມທົບປຸກສ້າງ-ສ້ອມແປງເຮືອນ ແລະ ພາຫະນະຂອງຜູ້ໄດ້ຮັບນະໂຍບາຍນັ້ນ</u>

1. <u>ການທັນສິດນຳໃຊ້ທີ່ດິນ :</u>

+ ໄລຍະທີ 2 ຜູ້ເຂົ້າການປະຕິວັດແຕ່ປີ 1955 - 1965 ແມ່ນໄດ້ຮັບນະໂຍບາຍສິດນຳໃຊ້ທີ່ດິນບ່ອນ ເຮືອນຕັ້ງຢູ່ຜູ້ໜຶ່ງບໍ່ໃຫ້ເກີນ 800 ຕາແມັດ ໃນຮູບການຊຳລະເງິນຄືນໃຫ້ລັດ 40% ຂອງມູນຄ່າທີ່ດິນຕາມຕົວຈິງໃນແຕ່ລະເຂດ.

+ ໄລຍະທີ 3 ສຳລັບຜູ້ເຂົ້າການປະຕິວັດແຕ່ປີ 1966 - 1975 ແມ່ນໄດ້ຮັບນະໂຍບາຍ ສິດນຳໃຊ້ທີ່ດິນບ່ອນເຮືອນຕັ້ງຢູ່ຜູ້ໜຶ່ງບໍ່ໃຫ້ເກີນ 800 ຕາແມັດ ໃນຮູບການຊຳລະເງິນຄືນໃຫ້ລັດ 60% ຂອງມູນຄ່າທີ່ດິນຕາມຕົວຈິງໃນແຕ່ລະເຂດ.

ຜູ້ທີ່ເຂົ້າການປະຕິວັດໃນ 2 ໄລຍະຂ້າງເທິງນີ້ກໍລະນີໄດ້ຮັບສິດນຳໃຊ້ທີ່ດິນຈາກລັດເກີນອັດ ຕາດັ່ງກ່າວກ່ອນໜ້າໄດ້ຮັບນະໂຍບາຍດັ່ງກ່າວນີ້ ຖ້າຜູ້ກ່ຽວຕ້ອງການນຳໃຊ້ທີ່ດິນ ສ່ວນເກີນນັ້ນແມ່ນຕ້ອງສຳລະຄືນໃຫ້ລັດໃນອັດຕາ100% ຕາມລາຄາການປະເມີນມູນຄ່າທີ່ດິນຕົວຈິງໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນບ່ອນທີ່ໄດ້ຮັບນະໂຍບາຍຕາມການປະເມີນຂອງຄະນະກຳມະການທີ່ປະເມີນມູນຄ່າທີ່ດິນ ຊຶ່ງຖືກແຕ່ງຕັ້ງໂດຍອົງການຄຸ້ມຄອງທີ່ດິນແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫລວງບ່ອນທີ່ດິນນັ້ນຕັ້ງຢູ່ ແລະ ຕາມການຕົກລົງຂອງການນຳອົງການຄຸ້ມຄອງທີ່ດິນ. ກຳນົດການຊຳລະ ເງິນຄ່າທີ່ດິນສ່ວນເກີນແມ່ນບໍ່ໃຫ້ກາຍ 10 ປີ ແລະ ທີ່ດິນ ສ່ວນເກີນນັ້ນຈະອອກໃບຕາດິນໃຫ້ກໍ່ຕໍ່ເມື່ອໄດ້ສຳລະເງິນຄືນໃຫ້ລັດຄົບຖ້ວນແລ້ວ.

2. <u>ການທັນກຳມະສິດເຮືອນລັດຄຸ້ມຄອງ</u> :

+ ໄລຍະທີ 2 ຜູ້ເຂົ້າການປະຕິວັດແຕ່ປີ 1955-1965 ແມ່ນໄດ້ຮັບນະໂຍບາຍ ທັນກຳມະສິດ ເຮືອນລັດຄຸ້ມຄອງ ຈຳນວນໜຶ່ງຫລັງ, ໃນຮູບການຊຳລະເງິນຄືນໃຫ້ລັດ 40% ຂອງມູນຄ່າທີ່ຄະນະກຳມະການຕີລາຄາ, ກຳນົດການຊຳລະເງິນຄ່າເຮືອນແມ່ນບໍ່ໃຫ້ກາຍ 10 ປີ ແລະ ຈະອອກຂໍ້ຕົກລົງມອບກຳມະສິດຖາວອນໃຫ້ກໍ່ຕໍ່ເມື່ອໄດ້ສຳລະເງິນຄືນໃຫ້ລັດຄົບຖ້ວນແລ້ວ.

+ ໄລຍະທີ 3 ຜູ້ເຂົ້າການປະຕິວັດແຕ່ປີ 1966 -1975 ແມ່ນໄດ້ຮັບນະໂຍບາຍທັນກຳມະສິດເຮືອນລັດຄຸ້ມຄອງຈຳນວນໜຶ່ງຫລັງ,ໃນຮູບການຊຳລະເງິນຄືນໃຫ້ລັດ 60% ຂອງມູນຄ່າທີ່ຄະນະກຳມະການຕີລາຄາ,ກຳນົດການຊຳລະເງິນຄ່າເຮືອນແມ່ນບໍ່ໃຫ້ກາຍ10 ປີ ແລະ ຈະອອກຂໍ້ຕົກລົງມອບກຳມະສິດຖາວອນໃຫ້ກໍ່ຕໍ່ເມື່ອໄດ້ສຳລະເງິນຄືນໃຫ້ລັດຄົບຖ້ວນແລ້ວ.

<u>ຕົວຢ່າງ</u> : ທ່ານ ກ.ເຂົ້າການປະຕິວັດໄລຍະ1955-1965 ຄະນະກຳມະການຕີລາຄາມູນຄ່າເຮືອນແລະດິນຂອງຜູ້ກ່ຽວທັງໝົດ 20.000.000 ກີບ x 40% = 8.000.000 ກີບ ທີ່ຕ້ອງໄດ້ສຳລະຄືນໃຫ້ລັດ .

<u>ຕົວຢ່າງ</u> : ທ່ານຂ.ເຂົ້າການປະຕິວັດໄລຍະ 1966-1975 ຄະນະກຳມະການຕີລາຄາ ມູນຄ່າເຮືອນ ແລະດິນຂອງຜູ້ກ່ຽວທັງໝົດ 20.000.000 ກີບ x 60% = 12.000.000 ກີບ ທີ່ຕ້ອງໄດ້ສຳລະເງິນຄືນໃຫ້ລັດ.

+ ສຳລັບເຮືອນ ແລະ ທີ່ດິນ ທີ່ລັດໄດ້ກຳນົດເປັນເຂດອະນຸລັກ ບໍ່ໃຫ້ທັນເປັນກຳມະສິດ ແລະ ສິດນຳໃຊ້ຖາວອນ ແຕ່ສາມາດຢູ່ໄດ້ຢ່າງຍາວນານຮອດເຊັ່ນລູກເຊັ່ນຫຼານ, ຖ້າຫາກມີຈຸດປະສົງຢາກສ້ອມແປງ, ປຸກສ້າງສິ່ງໃດໜຶ່ງຂຶ້ນຕື່ມ ຫລື ປັບໜ້າດິນຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງກ່ອນ.

+ ຖ້າຫາກລັດຕ້ອງການນຳໃຊ້ເຮືອນ ແລະ ທີ່ດິນດັ່ງກ່າວເພື່ອກິດຈະການລວມຂອງລັດ ຫລື ຜູ້ກ່ຽວຢາກຍ້າຍ

ໄປຢູ່ບ່ອນໃໝ່ລັດຈະຊອກບ່ອນໃໝ່ທົດແທນໃຫ້ຜູ້ກ່ຽວຕາມມູນຄ່າເຮືອນ ແລະ ທີ່ດິນ ທີ່ຄະນະກໍາມະການໄດ້ຕີລາຄາ.

ຕົວຢ່າງ : ທ່ານ ຄໍາ ນໍາໃຊ້ເຮືອນ ແລະ ທີ່ດິນຢູ່ໃນເຂດອະນຸລັກ ແຕ່ລັດຕ້ອງການນໍາໃຊ້ທີ່ດິນ ແລະເຮືອນ ຫລື ຜູ້ກ່ຽວຢາກຍົກຍ້າຍໄປຢູ່ບ່ອນໃໝ່, ຄະນະກໍາມະການໄດ້ຕີລາຄາມູນຄ່າຂອງເຮືອນ ແລະທີ່ດິນດັ່ງກ່າວເປັນເງິນ 200 ລ້ານກີບ ລັດຈະທົດແທນຄືນໃຫ້ ທ່ານ ຄໍາ ໃນມູນຄ່າ 200 ລ້ານກີບ.

- ຖ້າຫາກຜູ້ກ່ຽວມີເຮືອນຫຼາຍຫລັງ, ມີທີ່ດິນຫຼາຍຕອນໃຫ້ປະຕິບັດຕາມກົດໝາຍທີ່ດິນ .

3. ການກູ້ຢືມເງິນທຶນສິນທົບປຸກສ້າງ - ສ້ອມແປງເຮືອນ :

+ ລັດປະຕິບັດນະໂຍບາຍແກ້ໄຂທຶນກູ້ຢືມສິນທົບປຸກສ້າງ-ສ້ອມແປງເຮືອນໃຫ້ພະນັກງານບໍານານ, ພະນັກງານເສຍອົງຄະປະເພດ 1- 4 ແລະ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ຜູ້ທີ່ຍັງປະຈໍາການ ທີ່ເຂົ້າການປະຕິວັດແຕ່ປີ 1975 ຄືນຫລັງເຊິ່ງບໍ່ໄດ້ຢູ່ເຮືອນ ແລະ ທີ່ດິນລັດຄຸ້ມຄອງຈະໄດ້ສໍາລະຄືນໃຫ້ລັດຕາມ 2 ໄລຍະດັ່ງລຸ່ມນີ້ :

ໄລຍະທີ 2 :ແຕ່ປີ 1955 -1965 ຜູ້ທີ່ໄດ້ຮັບທຶນສິນທົບປຸກສ້າງ - ສ້ອມແປງເຮືອນ ຕ້ອງໄດ້ສໍາລະເງິນຄືນໃຫ້ລັດໃນອັດຕາ 40% ຂອງຈໍານວນເງິນທັງໝົດທີ່ຜູ້ກ່ຽວໄດ້ຮັບ, ການສໍາລະຄືນໃຫ້ລັດບໍ່ໃຫ້ກາຍ 10 ປີ.

ໄລຍະທີ 3 : ແຕ່ປີ1966-1975 ຜູ້ທີ່ໄດ້ຮັບທຶນສິນທົບປຸກສ້າງ-ສ້ອມແປງເຮືອນຕ້ອງໄດ້ສໍາລະເງິນຄືນໃຫ້ລັດໃນ ອັດຕາ 60% ຂອງຈໍານວນເງິນທັງໝົດທີ່ຜູ້ກ່ຽວໄດ້ຮັບ, ການສໍາລະເງິນຄືນໃຫ້ລັດບໍ່ໃຫ້ກາຍ 10 ປີ.

+ ສໍາລັບພະນັກງານຜູ້ທີ່ໄດ້ຢູ່ເຮືອນ ແລະ ທີ່ດິນລັດຄຸ້ມຄອງແຕ່ຜູ້ກ່ຽວຢາກຢືມເງິນສິນທົບ ປຸກສ້າງ -ສ້ອມແປງເຮືອນ, ຕ້ອງສໍາລະຄືນໃຫ້ລັດເຕັມ 100% ການສໍາລະບໍ່ເກີນ 10 ປີ.

+ ກໍານົດການກູ້ຢືມທຶນສິນທົບປຸກສ້າງ - ສ້ອມແປງເຮືອນ ຈາກງົບປະມານຂອງລັດ ຜູ້ໜຶ່ງໆສູງສຸດ ບໍ່ໃຫ້ເກີນ 50 ລ້ານກີບ ແລະ ຜູ້ໜຶ່ງມີສິດໄດ້ຮັບແຕ່ຄັ້ງດຽວເທົ່ານັ້ນ.

+ ການສໍາລະເງິນຄືນໃຫ້ລັດ ເລີ່ມແຕ່ເດືອນທີສອງ ເປັນຕົ້ນໄປ ແຕ່ລະອຽດຈະໄດ້ລະບຸແຈ້ງໃນບົດສັນຍາກູ້ຢືມຕ່າງຫາກ.

4. ການຫັນກໍາມະສິດພາຫະນະລົດລັດຄຸ້ມຄອງ :

+ ລັດປະຕິບັດນະໂຍບາຍຫັນກໍາມະສິດລົດປະເພດຕ່າງໆຂອງລັດທີ່ຜູ້ກ່ຽວໄດ້ນໍາໃຊ້ມາກ່ອນແລ້ວໃຫ້ພະນັກງານ ລັດຖະກອນ, ພະນັກງານບໍານານດ້ວຍຮູບການຂາຍ ໃນມູນຄ່າທີ່ຄະນະກໍາມະການຕີລາຄາໄດ້ ສໍາລະເງິນຄືນ ໃຫ້ລັດ ບໍ່ໃຫ້ເກີນ 10 ປີ ແລະ ຈະອອກຂໍ້ຕົກລົງມອບກໍາມະສິດຖາວອນໃຫ້ກໍ່ຕໍ່ເມື່ອໄດ້ສໍາລະເງິນຄືນໃຫ້ລັດຄົບຖ້ວນແລ້ວ.

III. ລັດປະຕິບັດນະໂຍບາຍມອບເຮືອນ, ສິດນໍາໃຊ້ທີ່ດິນ ແລະ ການຄິດໄລ່ເປັນເງິນປ່ຽນແທນໂກຕ້າລົດ.

1. ລັດປະຕິບັດນະໂຍບາຍມອບເຮືອນ ທີ່ລັດຄຸ້ມຄອງ, ເຊິ່ງບໍ່ນອນ ໃນເຂດອະນຸລັກເພື່ອເປັນຂອງຂວັນ ໃຫ້ແກ່ພະນັກງານປະຕິວັດອາວຸໂສ, ທີ່ເຮັດການປະຕິວັດຊາດປະຊາທິປະໄຕແຕ່ປີ 1954 ຄືນຫຼັງ ທີ່ມີອາຍຸການ 10 ປີຂຶ້ນ ໄປ, ວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນ, ຖ້າພະນັກງານເຫຼົ່ານັ້ນຫາກເສຍຊີວິດ ກໍມອບໃຫ້ແກ່ຜູ້ສືບທອດມູນມໍລະດົກ.

2. ພະນັກງານທີ່ນອນໃນເປົ້າໝາຍດັ່ງກາວຂ້າງເທິງນີ້ ແມ່ນໄດ້ຮັບນະໂຍບາຍສິດນໍາໃຊ້ທີ່ດິນຜູ້ໜຶ່ງບໍ່ໃຫ້ເກີນ 800 ຕາແມັດ ໃນຮູບການເປັນຂອງຂວັນ ; ກໍລະນີໄດ້ຮັບສິດນໍາໃຊ້ທີ່ດິນຈາກລັດເກີນອັດຕາດັ່ງກ່າວກ່ອນໜ້າໄດ້ຮັບນະໂຍບາຍດັ່ງກ່າວນີ້ ຖ້າຜູ້ກ່ຽວຕ້ອງການນໍາໃຊ້ທີ່ດິນ ສ່ວນເກີນນັ້ນແມ່ນ ຕ້ອງສໍາລະຄືນໃຫ້ລັດໃນອັດຕາ 100% ຕາມລາຄາການປະເມີນມູນຄ່າທີ່ດິນຕົວຈິງໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ບ່ອນທີ່ໄດ້ຮັບນະໂຍບາຍ ຕາມການປະເມີນຂອງຄະນະກໍາມະການທີ່ປະເມີນມູນຄ່າທີ່ດິຊຶ່ງຖືກແຕ່ງຕັ້ງໂດຍອົງການຄຸ້ມຄອງທີ່ດິນແຫ່ງຊາດ ຫລື ອົງການຄຸ້ມຄອງທີ່ດິນ ປະຈໍາແຂວງ, ນະຄອນຫລວງບ່ອນທີ່ດິນນັ້ນ

ຕັ້ງຢູ່ ແລະຕາມການຕົກລົງຂອງການນໍາອົງການຄຸ້ມຄອງທີ່ດິນ.

ກໍານົດການຊໍາລະເງິນຄ່າທີ່ດິນສ່ວນເກີນແມ່ນບໍ່ໃຫ້ກາຍ 10 ປີ ແລະ ທີ່ດິນ ສ່ວນເກີນນັ້ນຈະອອກ ໃບຕາດິນໃຫ້ກໍ່ຕໍ່ເມື່ອໄດ້ສໍາລະ ເງິນຄືນໃຫ້ລັດຄົບຖ້ວນແລ້ວ.

- ຖ້າຜູ້ກ່ຽວຫາກມີທີ່ດິນຫລາຍຕອນ ແລະ ມີເຮືອນຫຼາຍຫລັງ ໃຫ້ປະຕິບັດຕາມກົດໝາຍທີ່ດິນ.

3. <u>ລັດແກ້ໄຂເງິນປ່ຽນແທນໂກຕ້າລົດ.</u>

* ລັດມີນະໂຍບາຍແກ້ໄຂເງິນປ່ຽນແທນໂກຕ້າລົດ ໃຫ້ແກ່ພະນັກງານປະຕິວັດອາວຸໂສຜູ້ທີ່ເຮັດການປະຕິວັດຊາດ ປະຊາທິປະໄຕ ແຕ່ປີ 1954 ຄືນຫຼັງເຊິ່ງມີອາຍຸການ ແຕ່ 10 ປີ ຂຶ້ນໄປ, ວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນທີ່ບໍ່ທັນໄດ້ຮັບນະໂຍບາຍໂກຕາລົດຕາມດໍາລັດ 71/ນຍ ເກົ່າ, ດໍາລັດ 194/ນຍ ເກົ່າໃນເມື່ອກ່ອນ.

* <u>ວິທີຄິດໄລ່ເປັນເງິນປ່ຽນແທນໂກຕ້າລົດມີດັ່ງລຸ່ມນີ້ :</u>

- ສໍາລັບພະນັກງານປະຕິວັດອາວຸໂສ ທີ່ເຂົ້າການປະຕິວັດ 1954 ຄືນຫລັງ ເທົ່າກັບ 450 ດັດສະນີຄູນ ກັບ 2.500 ກີບ ແລ້ວຄູນ ກັບປີການຂອງຜູ້ກ່ຽວ.
- ວິລະຊົນແຫ່ງຊາດ ໃຫ້ເທົ່າກັບ 450 ດັດສະນີຄູນ 2.500 ກີບ ແລ້ວຄູນກັບປີການທີ່ທຽບໃຫ້ 45 ປີ.
- ນັກຮົບແຂ່ງຂັນ ໃຫ້ເທົ່າກັບ 425 ດັດສະນີ ຄູນ 2.500 ກີບ ແລ້ວ ຄູນກັບປີການທີ່ທຽບໃຫ້ 40 ປີ.

<u>ຕົວຢ່າງ</u> : ປ້າກໍ ພະນັກງານປະຕິວັດອາວຸໂສທີ່ເຂົ້າການປະຕິວັດປີ 1954 ຄືນຫລັງ ອອກພັກຜ່ອນປີ 1985 ອາຍຸການໄດ້ 31 ປີ : 450 x 2.500 ກີບ x 31 ປີການ = 34.875.000 ກີບ.

<u>ຕົວຢ່າງ:</u> ທ່ານຂໍເປັນວິລະຊົນແຫ່ງຊາດ : 450 ດັດສະນີ x2.500 ກີບ x45 ປີການທຽບໃຫ້ = 50.625.000 ກີບ.

<u>ຕົວຢ່າງ</u> : ທ່ານ ຄໍ ເປັນນັກຮົບແຂ່ງຂັນ : 425 x 2.500 ກີບ x 40 ປີ = 42.500.000 ກີບ.

- ສໍາລັບຜູ້ມີຄວາມສາມາດຊື້ລົດໄດ້ດ້ວຍຕົນເອງ ລັດນະໂຍບາຍແກ້ໄຂຍົກເວັ້ນພາສີ ຊຶ່ງຄິດໄລ່ໃຫ້ເທົ່າກັບນະໂຍບາຍທີ່ໄດ້ຮັບຈາກການ ຄິດໄລ່ເປັນເງິນປ່ຽນແທນໂກຕ້າລົດ.

**<u>ຕົວຢ່າງ</u>**: ທ່ານງໍ ເປັນພະນັກງານປະຕິວັດອາວຸໂສທີ່ເຂົ້າການປະຕິວັດປີ 1954 ຄືນຫລັງ ຊື້ລົດ1ຄັນ, ອາຍຸການປະຕິວັດຂອງຜູ້ກ່ຽວໄດ້ 50 ປີ ການ :450 ດັດສະນີ x ໜຶ່ງ ດັດສະນີ 2.500 ກີບ x 50 ປີການ= 56.250.000 ກີບ, ລັດຍົກເວັ້ນພາສີ ໃນມູນຄ່າ 56.250.000 ກີບ ໃຫ້ແກ່ທ່ານ ງໍ.

* <u>ສໍາລັບມູນຄ່າ ດັດສະນີຈະໄດ້ປ່ຽນແປງໄປຕາມ ລະບົບເງິນເດືອນພື້ນຖານຂອງ ລັດບໍລິຫານແຕ່ລະໄລຍະ.</u>

4 . ພະນັກງານເສຍອົງຄະພິເສດ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບໃນພາລະກິດປະຕິວັດຊາດ ປະຊາທິປະໄຕ, ລັດມີນະໂຍບາຍປຸກສ້າງເຮືອນມອບເປັນກໍາມະສິດແບບຖາວອນໃຫ້ຫຼັງໜຶ່ງຂະໜາດ 7 x 8 ເປັນເຮືອນວິນລາຊັ້ນດຽວ ມີ 2 ຫ້ອງນອນ, 1 ຫ້ອງຮັບແຂກ, ຫ້ອງແຕ່ງກິນ ແລະ ຫ້ອງນໍ້າ ໃນມູນຄ່າສູງສຸດບໍ່ໃຫ້ກາຍ 150 ລ້ານກີບ ຕໍ່າສຸດ100 ລ້ານກີບ ແລະ ການປຸກສ້າງເຮືອນຕ້ອງມີການສໍາຫລວດອອກແບບແລະແຜນຄິດໄລ່ ຖ້າຢູ່ສູນກາງຕ້ອງໄດ້ຮັບຮອງຈາກກະຊວງໂຍທາທິການ-ຂົນສົ່ງ, ສໍາລັບທ້ອງຖິ່ນຕ້ອງໄດ້ຮັບຮອງຈາກພະແນກໂຍທາທິການ - ຂົນສົ່ງຂອງແຂວງ, ນະຄອນຫລວງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ການປຸກສ້າງ ເຮືອນຕ້ອງ ມີ ຄະນະຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ເຊິ່ງຮັບການແຕ່ງຕັ້ງຈາກກະຊວງ, ອົງການ, ນະຄອນຫລວງ ແລະແຂວງ ທີ່ກ່ຽວຂ້ອງ ເພື່ອດໍາເນີນຕາມຂັ້ນຕອນຂອງລະບຽບ ການໃນການກໍ່ສ້າງ.

IV. <u>ການຢັ້ງຢືນເສຍອົງຄະ, ການໃຫ້ອຸດໜູນ ແລະ ການດູແລ</u> .

1. ການກໍານົດໂຮງໝໍກວດຜູ້ຖືກບາດ:ຈັບຍ້ອນການສູ້ຮົບ ແລະຮັບໃຊ້ການສູ້ຮົບໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ເພື່ອຢັ້ງຢືນການເສຍອົງຄະ ແລະ ຈັດປະເພດເສຍອົງຄະໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້ :

- ຜູ້ຖືກບາດເຈັບຕ້ອງໄປກວດຢູ່ໂຮງໝໍ 103, ໂຮງໝໍ 109 , ໂຮງໝໍແຂວງ ແລະ ໂຮງໝໍບໍລິເວນ ເພື່ອຢັ້ງຢືນການເສຍອົງຄະ.

2. ຄະນະກໍາມະການຄົ້ນຄວ້າຈັດປະເພດເສຍອົງຄະ ມີ 2 ຂັ້ນຄື :

<u>ຂັ້ນສູນກາງ</u> :ແຕ່ງຕັ້ງໂດຍລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊຶ່ງປະກອບດ້ວຍ ກົມບໍານານ, ເສຍອົງຄະ ແລະ ພິການ, ກົມເສນາຮັກ, ກົມນະໂຍບາຍ ກົມໃຫຍ່ການເມືອງກອງທັບ, ກົມນະໂຍບາຍກົມ ກົມໃຫຍ່ການເມືອງ ກະຊວງປ້ອງກັນຄວາມສະຫງົບ, ກົມປິ່ນປົວກະຊວງສາທາລະນະສຸກ, ກົມນະໂຍບາຍຄະນະຈັດຕັ້ງສູນກາງພັກ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ.

<u>ຂັ້ນທ້ອງຖິ່ນ</u> : ແຕ່ງຕັ້ງໂດຍເຈົ້າຄອງນະຄອນ ແລະ ເຈົ້າແຂວງຊຶ່ງປະກອບດ້ວຍພະແນກແຮງງານ ແລະສະຫວັດດີການສັງຄົມນະຄອນຫລວງ, ແຂວງ, ພະແນກເສນາຮັກ, ພະແນກ ນະໂຍບາຍກອງບັນຊາການທະຫານແຂວງ, ພະແນກນະໂຍບາຍ ປກສ , ພະແນກສາທາລະນະສຸກ, ຄະນະຈັດຕັ້ງແຂວງ ແລະ ສະຫະພັນນັກຮົບເກົ່າແຂວງ. ໜ້າທີ່ຂອງຄະນະດັ່ງກ່າວ ແມ່ນຄົ້ນຄວ້າການເສຍກໍາລັງແຮງງານ ຂອງຜູ້ເສຍອົງຄະ ເພື່ອຈັດລະດັບປະເພດເສຍອົງຄະອອກເປັນ 5 ປະເພດ ຕາມຕາຕະລາງດັ່ງລຸ່ມນີ້ :

| ລ/ດ | ລະດັບການເສຍກໍາລັງແຮງງານ | ຈັດປະເພດເສຍອົງຄະ |
|---|---|---|
| 1 | ແຕ່ 81%-100% | ປະເພດພິເສດ |
| 2 | ແຕ່ 71%-80% | ປະເພດ I |
| 3 | ແຕ່ 61%-70% | ປະເພດ II |
| 4 | ແຕ່ 51%-60% | ປະເພດ III |
| 5 | ແຕ່ 41%-50% | ປະເພດ IV |

3. ລັດກໍານົດນະໂຍບາຍເງິນອຸດໜູນເສຍອົງຄະແຕ່ລະປະເພດ ຕໍ່ຜູ້ມີເງິນເດືອນ, ເງິນບໍານານ ແລະ ຜູ້ດູແລເສຍອົງຄະພິເສດ ດັ່ງນີ້:

- ປະເພດເສຍອົງຄະພິເສດ:120% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ I 95% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ II 85% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ III 75% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ IV 70% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5

4. ການຄິດໄລ່ເງິນອຸດໜູນເສຍອົງຄະແມ່ນ ເອົາສ່ວນຮ້ອຍຂອງປະເພດເສຍອົງຄະ ຄູນ ກັບເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5 .

<u>ຕົວຢ່າງ</u> :ທ່ານກໍາເສຍອົງຄະປະເພດ 1: 95%, (ເງິນເດືອນພື້ນຖານຂອງລັດບໍລິຫານ ຂັ້ນ1 ຂັ້ນ 5 ເປັນເງິນເທົ່າກັບ 347.500 ກີບ) ຜູ້ກ່ຽວຈະໄດ້ຮັບເງິນອຸດໜູນເສຍອົງຄະ ເທົ່າກັບ

$$\frac{95 \times 347.500 \text{ ກີບ}}{100} = 330.125 \text{ ກີບ}$$

5. ການຄິດໄລ່ເງິນອຸດໜູນໃຫ້ຜູ້ດູແລຜູ້ເສຍອົງຄະພິເສດທີ່ເປັນໂສດ ແລະ ເປັນເມຍທີ່ບໍ່ມີເງິນເດືອນ, ເງິນບໍານານຈະໄດ້ກິນເງິນອຸດໜູນດູແລເທົ່າກັບ 100% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ1 ຂັ້ນ 5 .

<u>ຕົວຢ່າງ</u> :ນາງ ຂໍ ຜູ້ດູແລຜູ້ເສຍອົງຄະພິເສດ $\frac{100 \times 347.500 \text{ ກີບ}}{100}$ = 347.500 ກີບ

- ຜູ້ດູແລເສຍອົງຄະພິເສດ ແມ່ນເມຍ ຫຼື ລູກຍັງໂສດ, ຖ້າຫາກຜູ້ເສຍອົງຄະພິເສດ ເສຍຊີວິດແລ້ວຜູ້ດູແລຈະໄດ້ຮັບເງິນອຸດໜູນດູແລຈົນກວ່າຜູ້ກ່ຽວໄດ້ສ້າງຄອບຄົວໃໝ່ ຫຼືເສຍຊີວິດ, ກໍລະນີຜູ້ດູແລ ຍັງມີຜົວ ຫຼື ເມຍ, ເມື່ອຜູ້ເສຍອົງຄະພິເສດຫາກເສຍຊີວິດໄປ ຜູ້ດູແລຈະບໍ່ໄດ້ຮັບເງິນອຸດໜູນດູແລຕໍ່ໄປອີກ.

6. ສະເພາະຜູ້ດູແລ, ທີ່ເປັນລັດຖະກອນ, ທະຫານ, ຕຳຫຼວດ, ເປັນຜູ້ດູແລຜູ້ເສຍອົງຄະພິເສດ ຜູ້ກ່ຽວຈະໄດ້ຮັບແຕ່ເງິນເດືອນຕາມ ຂັ້ນ - ຂັ້ນ ຫລື ຕາມຂັ້ນຕຳແໜ່ງ ຂອງຕົນເທົ່ານັ້ນ.

- ກໍລະນີ ຜູ້ດູແລຜູ້ເສຍອົງຄະພິເສດ, ທີ່ມີເງິນບຳນານ ຈະໄດ້ຮັບເງິນດູແລ 100% ຕື່ມອີກຈົນກວ່າຜູ້ເສຍອົງຄະພິເສດເສຍຊີວິດຈຶ່ງຢຸດເຊົາຮັບເງິນອຸດໜູນດູແລ.

7. ລັດປະຕິບັດນະໂຍບາຍໃຫ້ເງິນອຸດໜູນແກ່ພະນັກງານເສຍອົງຄະຢູ່ທ້ອງຖິ່ນທີ່ບໍ່ມີເງິນເດືອນ ແລະເງິນບຳນານ ຈະໄດ້ຮັບເງິນອຸດໜູນເສຍອົງຄະ ແຕ່ລະເດືອນເຊິ່ງໄດ້ກຳນົດແຕ່ລະປະເພດດັ່ງນີ້ :

- ປະເພດເສຍອົງຄະພິເສດ 220% ຂອງເງິນເດືອນພື້ນຖານລັດບໍລິຫານຂັ້ນ 1 ຂັ້ນ 5
- ປະເພດ I 150% ຂອງ ເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ II 130% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ III 120% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5
- ປະເພດ IV 100% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5

ຕົວຢ່າງ : ທ້າວ ຄຳ ເສຍອົງຄະປະເພດ I : $\frac{150 \times 347.500 \text{ ກີບ}}{100}$ = 521.250 ກີບ

- ການຄິດໄລ່ເງິນອຸດໜູນໃຫ້ຜູ້ດູແລເສຍອົງຄະພິເສດທີ່ລົງສູ່ທ້ອງຖິ່ນໃຫ້ເອົາ 100% ຂອງເງິນເດືອນພື້ນຖານລັດບໍລິຫານ ຂັ້ນ 1 ຂັ້ນ 5 .

ຕົວຢ່າງ :ນາງຄຳເປັນຜູ້ດູແລຜູ້ເສຍອົງຄະພິເສດທີ່ລົງຮາກຖານທ້ອງຖິ່ນໃຫ້ປະຕິບັດຄືກັນກັບຜູ້ດູແລຜູ້ເສຍອົງຄະພິເສດທີ່ຍັງຢູ່ສູນເສຍອົງຄະ, ຖ້າແມ່ນ ຜູ້ດູແລທີ່ບໍ່ມີເງິນເດືອນບໍ່ມີເງິນບຳນານເຊິ່ງເປັນຜົວ ຫຼື ເມຍຂອງຜູ້ເສຍອົງຄະພິເສດ, ເມື່ອຜູ້ເສຍອົງຄະພິເສດຫາກເສຍຊີວິດໄປແລ້ວ ຜູ້ດູແລຍັງຈະຕ້ອງໄດ້ຮັບເງິນອຸດໜູນດູແລຕໍ່ໄປຈົນກວ່າຜູ້ກ່ຽວໄດ້ສ້າງຄອບຄົວໃໝ່.

$$\frac{100 \times 347.500 \text{ ກີບ}}{100} = 347.500 \text{ ກີບ}$$

8. ລັດປະຕິບັດນະໂຍບາຍ ປະກອບອົງຄະທຽມ, ຕັດເຄື່ອງນຸ່ງ, ການຍົກຍ້າຍຖິ່ນຖານ ແລະ ການອຸດໜູນເສຍຊີວິດໃຫ້ ແກ່ພະນັກງານເສຍອົງຄະ ແຕ່ລະປະເພດ ດັ່ງນີ້ :

- ການປະກອບອົງຄະທຽມຕ່າງໆເຊັ່ນ : ຂາ, ແຂ່ງ, ແຂນ, ເກີບ, ກ້ອງຫູຟັງ, ແວ່ນຕາດຳ, ລໍ້ເລື່ອນ ແລະ ໄມ້ຄ້ຳຊູ ພ້ອມທັງຈ່າຍ ຄ່າເດີນທາງ, ກິນຢູ່, ພັກເຊົາໃຫ້ຜູ້ເສຍ ອົງຄະ ຈາກທ້ອງຖິ່ນມາຕໍ່ຂາແຂ່ງ, ແຂນ ແລະ ເກີບ ທີ່ໂຮງງານອົງຄະທຽມ 686, ພະແນກ ແຮງງານ ແລະ ສະຫັວດດີການສັງຄົມແຂວງຮັບຜິດຊອບການໃຊ້ຈ່າຍໃນເວລາໄປ ; ພາຍຫຼັງຕໍ່ອົງຄະທຽມ ແລ້ວກະຊວງແຮງງານ ແລະສະຫັວດດີການສັງຄົມ ຮັບຜິດຊອບສົ່ງກັບ.
- ການປະກອບເຄື່ອງນຸ່ງຫົ່ມໃຫ້ຜູ້ເສຍອົງຄະທີ່ມີບັນຊີຢູ່ໃນສູນ ຕາມລາຍຊື່ມອບ - ໂອນ ຈາກກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນແຕ່ລະຄັ້ງໂດຍການນຳໃຊ້ງົບປະມານຂອງລັດຄື :

+ ປະກອບເຄື່ອງນຸ່ງ 2 ຊຸດ ແລະ ເກີບ 2 ຄູ່/ຄົນ/ ປີ.
+ ປະກອບມຸ້ງ ແລະ ຜ້າຫົ່ມ 2 ປີ/ຊຸດ/ຄົນ.

- ການຂຶ້ນແຜນງົບປະມານປະກອບເຄື່ອງນຸ່ງຫົ່ມຕ່າງໆ ໃຫ້ພະນັກງານເສຍອົງຄະ ໃນແຕ່ລະປີນັ້ນ, ແມ່ນ ມອບໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງເປັນຜູ້ຮັບຜິດຊອບ( ຖ້າມີສູນເສຍອົງຄະ) ເພື່ອສົ່ງໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ( ການຂຶ້ນແຜນງົບປະມານຕັດເຄື່ອງນຸ່ງໃຫ້ຜູ້ ເສຍອົງຄະຢູ່ຂັ້ນແຂວງແມ່ນມອບໃຫ້ແຂວງ ເປັນຜູ້ຈັດຕັ້ງປະຕິບັດ ).

9. ສຳລັບການປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານປະຕິວັດອາວຸໂສ ຜູ້ທີ່ມີຄຸນງາມຄວາມດີໃນການປະຕິວັດຊາດປະຊາທິປະໄຕແຕ່ຜູ້ກ່ຽວເຄີຍຖືກປະຕິບັດວິໃນ( ຄະດີ )ນັ້ນ, ລັດຖະບານຈະເປັນຜູ້ພິຈາລະນາ ເປັນສະເພາະ.

V. <u>ການໃຫ້ເງິນອຸດໜູນເທື່ອດຽວຕໍ່ຜູ້ທີ່ຍັງມີຊີວິດ ແລະ ຜູ້ເສຍສະຫຼະຊີວິດ.</u>

1. ການໃຫ້ເງິນອຸດໜູນເທື່ອດຽວໃຫ້ ຄະນະຕາແສງ, ຄະນະແນວລາວຮັກຊາດ ແລະ ກອງຫຼອນ ຜູ້ຍັງມີຊີວິດທີ່ເຄື່ອນໄຫວຢູ່ຮາກຖານການເມືອງ ເຮັດການປະຕິວັດຊາດປະຊາທິປະໄຕ ແຕ່ປີ 1975 ຄືນຫຼັງຊຶ່ງມີອາຍຸການປະຕິວັດຕໍ່ເນື່ອງ ແຕ່ 10 - 15 ປີ, ໃຫ້ປະຕິບັດຕາມ 3 ໄລຍະຂອງການປະຕິວັດດັ່ງນີ້ :

+ ໄລຍະທີ 1 ແຕ່ປີ 1954 ຄືນຫຼັງ.
+ ໄລຍະທີ 2 ແຕ່ປີ 1955 - 1965.
+ ໄລຍະທີ 3 ແຕ່ປີ 1966 - 1975.

<u>ຕົວຢ່າງ</u> : ການຄິດໄລ່ອຸດໜູນເທື່ອດຽວໃຫ້ຄະນະຕາແສງ, ຄະນະແນວລາວຮັກຊາດ ແລະ ກອງຫຼອນ ມີອາຍຸການ 15 ປີ, ທຽບໃຫ້ຊັ້ນ1ຂັ້ນ 5 ເທົ່າກັບ139 ດັດສະນີ ຄູນໜຶ່ງມູນຄ່າດັດສະນີຄູນໃຫ້ປີການ (139 x 2.500 ກີບ) x 15 ປີ = 5.212.500 ກີບ.

2. ການໃຫ້ເງິນອຸດໜູນເທື່ອດຽວໃຫ້ພະນັກງານ - ລັດຖະກອນ, ທະຫານ, ຕຳຫລວດ ຜູ້ທີ່ບໍ່ມີເງື່ອນໄຂຮັບບຳນານຄືນໃຫ້ຄິດໄລ່ຊັ້ນ - ຂັ້ນເງິນເດືອນສຸດທ້າຍຂອງຜູ້ກ່ຽວ ຄູນໃຫ້ປີການແລ້ວຄູນໃຫ້ 75% .
<u>ຕົວຢ່າງ</u> :ທ່ານ ກ ອາຍຸກະສຽນ 49 ປີ, ອາຍຸການ 18 ປີ, ຊັ້ນ-ຂັ້ນ 1/5 ເທົ່າກັບ 139 ດັດສະນີຄູນມູນຄ່າໜຶ່ງດັດສະນີ 2.500 ກີບ x18 ປີການ x75%.

<u>(139 x 2.500 x 18 ປີ ການ)x 75</u> = 4.691.250 ກີບ
100

3. ການໃຫ້ເງິນອຸດໜູນເທື່ອດຽວແກ່ຜູ້ທີ່ເສຍສະຫຼະຊີວິດໃນປາງສົງຄາມທີ່ເຂົ້າການປະຕິວັດນັບແຕ່ປີ 1975 ຄືນຫລັງ, ຍ້ອນການສູ້ຮົບ ແລະ ຮັບໃຊ້ສູ້ຮົບໃນພາລະກິດປະຕິວັດຊາດປະຊາທິປະໄຕ ແລະ ໄລຍະປົກແລະໄລຍະປົກປັກຮັກສາແລະສ້າງສາພັດທະນາປະເທດຊາດແຕ່ປີ 1985 ຄືນຫຼັງ ໃຫ້ປະຕິບັດນະໂຍບາຍຕາມ 4 ໄລຍະຂອງການປະຕິວັດດັ່ງນີ້ :

- ໄລຍະທີ I ແຕ່ປີ 1954 ຄືນຫຼັງ
- ໄລຍະທີ II ແຕ່ປີ 1955 - 1960
- ໄລຍະທີ III ແຕ່ປີ 1961 - 1975
- ໄລຍະທີ IV ແຕ່ປີ 1976 - 1985

- ການທຽບຊັ້ນ - ຂັ້ນ ແລະ ຄິດໄລ່ ເງິນອຸດໜູນໃຫ້ແກ່ ຄະນະຕາແສງ, ຄະນະແນວລາວຮັກຊາດ, ກອງຫລອນ, ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫລວດ ຜູ້ເສຍສະຫລະຊີວິດຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ຕ່ຳສຸດ ຊັ້ນ 3 ຂັ້ນ 1 ແລະ ສູງສຸດ ຊັ້ນ 5 ຂັ້ນ 10 ຕາມຕາຕະລາງຕໍ່ໄປນີ້ :

| ລ/ດ | ທຽບ ຊັ້ນ- ຂັ້ນ | ດັດສະນີ | ມູນຄ່າ ດັດສະນີ | ຈ/ນ ເດືອນ | ການກຳນົດບັນດາເປົ້າໝາຍ |
|---|---|---|---|---|---|
| 1 | 5/10 | 366 | 2.500 | 15 | ກຳມະການສູນກາງ, ກຳມະການແນວລາວຮັກຊາດ, ຫົວໜ້າກອງບັນຊາການເຂດ ແລະ ຊັ້ນພັນເອກ. |
| 2 | 5/8 | 344 | 2.500 | 15 | ປະທານແຂວງ, ຮອງຫົວໜ້າກອງບັນຊາການເຂດ, ຫົວໜ້າກອງພັນ, ຊັ້ນພັນໂທ |
| 3 | 4/10 | 288 | 2.500 | 15 | ຮອງປະທານແຂວງ, ຄະນະກອງບັນຊາການທະຫານເຂດ, ຮອງກອງພັນ, ຊັ້ນພັນຕີ. |
| 4 | 4/8 | 270 | 2.500 | 15 | ເລຂາພັກເມືອງ, ປະທານເມືອງ, ຄະນະກອງພັນ, ຫົວໜ້າກອງຮ້ອຍ, ຊັ້ນຮ້ອຍເອກ |
| 5 | 4/6 | 254 | 2.500 | 15 | ຮອງເລຂາພັກ ຫລື ຮອງປະທານເມືອງ, ຮອງຫົວໜ້າກອງຮ້ອຍ, ຊັ້ນຮ້ອຍໂທ. |
| 6 | 4/4 | 240 | 2.500 | 15 | ກຳມະການເມືອງ, ຄະນະກອງຮ້ອຍ, ຫົວໜ້າໝວດ, ຊັ້ນຮ້ອຍຕີ |
| 7 | 3/10 | 226 | 2.500 | 15 | ຮອງຫົວໜ້າໝວດ, ຊັ້ນອາທິ. |
| 8 | 3/6 | 200 | 2.500 | 15 | ຫົວໜ້າໝູ່, ຊັ້ນສິບເອກ |
| 9 | 3/1 | 175 | 2.500 | 15 | ນັກລົບ, ຊັ້ນ 1-2, ພາລະກອນ |
| 10 | 3/3 | 185 | 2.500 | 15 | ຮອງຫົວໜ້າໝູ່, ຊັ້ນສິບໂທ, ສິບຕີ. |
| 11 | 3/11 | 233 | 2.500 | 12 | ຄະນະຕາແສງ |
| 12 | 3/8 | 212 | 2.500 | 12 | ແນວລາວຮັກຊາດ |
| 13 | 3/1 | 175 | 2.500 | 12 | ກອງຫລອນ |

<u>ຕົວຢ່າງ :</u> ທ່ານກໍເລຂາພັກເມືອງ , ປະທານເມືອງ, ຄະນະກອງພັນ, ຫົວໜ້າກອງຮ້ອຍ (ຮ້ອຍເອກ) ທຽບໃຫ້ ຊັ້ນ 4 ຂັ້ນ 8 ເທົ່າກັບ 270 ດັດສະນີ x 2.500 ກີບ x15 ເດືອນ=10,125,000ກີບ.

<u>ຕົວຢ່າງ</u> : ທ່ານ ຂໍ ຄະນະຕາແສງ ທຽບໃຫ້ ຊັ້ນ 3 ຂັ້ນ11 ເທົ່າກັບ 233 ດັດສະນີ x 2.500 ກີບ x12 ເດືອນ 233 x 2.500 ກີບ x 12 ເດືອນ = 6.990.000 ກີບ

4. <u>ລັດປະຕິບັດນະໂຍບາຍ ແກ້ໄຂເງິນເບັ້ຍລ້ຽງໃຫ້ພໍ່ແມ່ ທີ່ຂາດຜູ້ລ້ຽງດູເບິ່ງແຍງ.</u>

ພໍ່ແມ່ທີ່ມີລູກຄົງ ຫລື ລູກລ້ຽງ ທີ່ໄດ້ເສຍສະຫລະຊີວິດໝົດ ໃນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ຈະໄດ້ຮັບເງິນເບັ້ຍລ້ຽງແຕ່ລະເດືອນຕະຫລອດຊີວິດ ທຽບໃຫ້ຊັ້ນ 1ຂັ້ນ 1 ຂອງເງິນເດືອນພື້ນຖານລັດບໍລິຫານ.

<u>ຕົວຢ່າງ</u> : ພໍ່ ຫລື ແມ່ ຂອງທ້າວ ກ, ຊັ້ນ 1 ຂັ້ນ1 ເທົ່າກັບ 135 ດັດສະນີ x 2.500 ກີບ.

135 x 2.500 ກີບ = 337.500 ກີບ

- ກໍລະນີພໍ່ ຫຼື ແມ່ ຫາກເສຍຊີວິດໃຫ້ຄິດໄລ່ເອົາເງິນເບັ້ຍລ້ຽງຂອງຜູ້ກ່ຽວ ຄູນ 12 ເດືອນ ເປັນເງິນນະໂຍບາຍອຸດໜູນ ປົງສົບສິ່ງສະການໂດຍຄິດໄລ່ໃຫ້ເທື່ອດຽວ.

<u>ຕົວຢ່າງ</u> : 337.500 ກີບ x 12 ເດືອນ = 4.050.000 ກີບ

VI. <u>ການປະກອບເອກະສານສະເໜີ ຄົ້ນຄວ້າແກ້ໄຂນະໂຍບາຍຕ່າງໆ ຕໍ່ ບັນດາເປົ້າໝາຍທີ່ໄດ້ລະບຸໄວ້ໃນດຳລັດສະບັບນີ້ໃຫ້ປະຕິບັດຄື</u> :

1. <u>ນະໂຍບາຍ ທັນກຳມະສິດທີ່ດິນ ແລະ ເຮືອນມີ:</u>

- ໃບຄຳຮ້ອງຂອງຜູ້ກ່ຽວ.
- ປະຫວັດການເຄື່ອນໄຫວຂອງຜູ້ກ່ຽວເຊັ່ນຢັ້ງຢືນ ແລະ ປະທັບຕາຈາກອົງການ ທີ່ກ່ຽວຂ້ອງ.
- ມີໃບສະເໜີກົມກອງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ຂໍ້ຕົກລົງ ມອບສິດນຳໃຊ້ຂອງກະຊວງ, ອົງການ, ທ້ອງຖິ່ນທີ່ກ່ຽວຂ້ອງ.
- ໃບຢັ້ງຢືນບ່ອນທີ່ດິນ ແລະ ເຮືອນຕັ້ງຢູ່ທີ່ບໍ່ນອນໃນເຂດອານຸລັກຈາກກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.
- ບົດບັນທຶກການຕີລາຄາຂອງຄະນະກຳມະການ.

2. <u>ນະໂຍບາຍກູ້ຢືມທຶນສົມທົບປຸກສ້າງ - ສ້ອມແປງເຮືອນ ຂັ້ນສູນກາງ</u> :

- ໃບຄຳຮ້ອງ ຂອງຜູ້ກ່ຽວ.
- ຂໍ້ຕົກລົງ ແກ້ໄຂນະໂຍບາຍ ທຶນສົມທົບປຸກສ້າງ - ສ້ອມແປງເຮືອນຈາກກະຊວງ, ອົງການທີ່ກ່ຽວຂ້ອງ.
- ມີໃບສະເໜີຂອງກະຊວງ, ອົງການ ແລະ ທ້ອງຖິ່ນ ເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ຊີວະປະຫວັດການເຄື່ອນໄຫວແຕ່ລະໄລຍະຂອງຜູ້ກ່ຽວ.

<u>ຂັ້ນທ້ອງຖິ່ນ</u> :

- ໃບຄຳຮ້ອງ ຂອງຜູ້ກ່ຽວ.
- ໜັງສືສະເໜີ ຂອງກົມກອງ, ພະແນກການ ແລະ ເມືອງ ທີ່ກ່ຽວຂ້ອງ.
- ແຜນຄິດໄລ່ການປຸກສ້າງ - ສ້ອມແປງເຮືອນ.
- ຊີວະປະຫວັດການເຄື່ອນໄຫວແຕ່ລະໄລຍະຂອງຜູ້ກ່ຽວ.

3. <u>ນະໂຍບາຍມອບເຮືອນ ແລະ ທີ່ດິນເພື່ອເປັນຂອງຂວັນ</u> :

- ໃບຄຳຮ້ອງຂອງຜູ້ກ່ຽວ.
- ມີໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ຂໍ້ຕົກລົງ ມອບສິດນຳໃຊ້ຂອງກະຊວງ, ອົງການ, ທ້ອງຖິ່ນທີ່ກ່ຽວຂ້ອງ.
- ຊີວະປະຫວັດການເຄື່ອນໄຫວຂອງຜູ້ກ່ຽວ.
- ບັດບຳນານ (ຖ້າມີ), ບັດເສຍອົງຄະພິເສດ.
- ບັດປະຈຳຕົວ ຫລື ສຳເນົາປຶ້ມສຳມະໂນຄົວ.
- ໃບຢັ້ງຢືນທີ່ຢູ່ ຕິດຮູບຂະໜາດ 3x4
- ວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນ ຕ້ອງມີໃບຢັ້ງຢືນນາມມະຍົດ.

4. <u>ນະໂຍບາຍແກ້ໄຂເງິນປ່ຽນແທນໂກຕ້າລົດມືຖື</u> :

- ໃບຄຳຮ້ອງຂອງຜູ້ກ່ຽວ.
- ໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງບັນຊີລາຍຊື່ລະອຽດເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ສຳເນົາບັດບຳນານ (ຖ້າມີ), ບັດເສຍອົງຄະພິເສດ.
- ບັດປະຈຳຕົວ ຫລື ສຳເນົາປຶ້ມສຳມະໂນຄົວ.
- ໃບຢັ້ງຢືນທີ່ຢູ່ ຕິດຮູບຂະໜາດ 3x4.
- ວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນ ຕ້ອງມີໃບຢັ້ງຢືນນາມມະຍົດ.
- ຊີວະປະຫວັດການເຄື່ອນໄຫວຂອງຜູ້ກ່ຽວ.

5. <u>ນະໂຍບາຍເງິນອຸດໜູນ ໃຫ້ຜູ້ເສຍອົງຄະ ມີດັ່ງນີ້</u> :

- ໃບຄຳຮ້ອງຂອງຜູ້ກ່ຽວ.
- ຊີວະປະຫວັດການເຄື່ອນໄຫວແຕ່ລະໄລຍະຂອງຜູ້ກ່ຽວ.
- ມີລາຍເຊັນຂອງຫົວໜ້າທີ່ກ່ຽວບ່ອນເກີດເຫດທີ່ພາໃຫ້ເສຍອົງຄະ ແຕ່ 3 ຄົນຂຶ້ນໄປ.
- ໃບຢັ້ງຢືນປະເພດເສຍອົງຄະ ຂອງບັນດາໂຮງໝໍ ທີ່ໄດ້ກຳນົດຢູ່ໃນມາດຕາ 6 ຂອງ ດຳລັດສະບັບນີ້.
- ໃບຢັ້ງຢືນເຫດຜົນເສຍອົງຄະຈາກກົມກອງທ້ອງຖິ່ນທີ່ກ່ຽວຂ້ອງ(ວັນ, ເດືອນ, ປີ ແລະ ສະຖານທີ່ເສຍອົງຄະຢ່າງຈະແຈ້ງ).
- ສຳເນົາບັດປະຈຳຕົວ ຫລື ສຳມະໂນຄົວ.
- ໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງບັນຊີລາຍຊື່ລະອຽດເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

6. <u>ນະໂຍບາຍອຸດໜູນເທື່ອດຽວ ໃຫ້ຜູ້ບໍ່ມີເງື່ອນໄຂຮັບບຳນານຄືນ</u> :

- ໃບຄຳຮ້ອງຂອງຜູ້ກ່ຽວ 2 ສະບັບ.
- ໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ຊີວະປະຫວັດການເຄື່ອນໄຫວຂອງຜູ້ກ່ຽວ 2 ສະບັບ ຕິດຮູບ 3x4.
- ມີໃບຢັ້ງຢືນທີ່ຢູ່ ຈາກອຳນາດການປົກຄອງບ້ານ 2 ສະບັບ.
- ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ 2 ສະບັບ.
- ໃບປົດປ່ອຍອອກອຸດໜູນ ຫລື ຂໍ້ຕົກລົງສະບັບຕົ້ນ.
- ກໍລະນີບໍ່ມີໃບປົດປ່ອຍອອກອຸດໜູນໃຫ້ມີໃບຢັ້ງຢືນຂອງກົມກອງເກົ່າແຕ່ 3 ຄົນຂຶ້ນໄປ 2 ສະບັບ.
- ຖ້າແມ່ນກຳລັງປະກອບອາວຸດຕ້ອງມີໃບເລື່ອນຊັ້ນ.
- ຮູບຂະໜາດ 2.5 x 2 = 4 ໃບ.

7. <u>ນະໂຍບາຍເງິນອຸດໜູນເທື່ອດຽວໃຫ້ຜູ້ເສຍສະຫລະຊີວິດ</u> :

- ມີໃບຄຳຮ້ອງຂອງຜູ້ທີ່ສະເໜີ 2 ສະບັບ.
- ໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ມີໃບຈາລຶກບຸນຄຸນຂອງຜູ້ທີ່ເສຍສະຫຼະຊີວິດ (ຖ້າມີ) ກໍລະນີບໍ່ມີຕ້ອງໄດ້ຮັບການຢັ້ງຢືນ ຈາກຮາກຖານທ້ອງຖິ່ນ ທີ່ກ່ຽວຂ້ອງ 2 ສະບັບ.
- ຊີວະປະຫວັດຂອງຜູ້ທີ່ເສຍສະຫລະຊີວິດ.
- ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວຂອງຜູ້ສະເໜີ.
- ໃບຢັ້ງຢືນທີ່ຢູ່ຂອງຜູ້ສະເໜີ 2 ສະບັບ ຕິດຮູບ 3x4.
- ການຢັ້ງຢືນສະຖານທີ່ເສຍສະຫຼະຊີວິດ (ວັນ, ເດືອນ, ປີ, ກົມກອງ) 2 ສະບັບ.

8. <u>ນະໂຍບາຍເງິນອຸດໜູນເທື່ອດຽວໃຫ້ຜູ້ຍັງມີຊີວິດ</u> :

- ມີໃບຄຳຮ້ອງຂອງຜູ້ທີ່ສະເໜີ 2 ສະບັບ.
- ໃບສະເໜີ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງບັນຊີລາຍຊື່ລະອຽດເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ຊີວະປະຫວັດຂອງຜູ້ກ່ຽວ 2 ສະບັບ.
- ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວຂອງຜູ້ກ່ຽວ 2 ສະບັບ.
- ໃບຢັ້ງຢືນທີ່ຢູ່ຂອງຜູ້ກ່ຽວ2 ສະບັບ ຕິດຮູບ 3x4.

9. <u>ນະໂຍບາຍເງິນເບັຍລ້ຽງ ໃຫ້ພໍ່ແມ່ ທີ່ຂາດຜູ້ລ້ຽງດູ</u> :

- ໃບຄໍາຮ້ອງຂອງຜູ້ເປັນພໍ່ແມ່ທີ່ຂາດຜູ້ລ້ຽງດູ 2 ສະບັບ.
- ໃບສະເໜີຂອງກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ໃບຢັ້ງຢືນທີ່ຢູ່ຂອງຜູ້ຂາດຜູ້ລ້ຽງດູ 2 ສະບັບ ຕິດຮູບ 3x4.
- ໜັງສືຢັ້ງຢືນການເສຍສະຫຼະຊີວິດ(ວັນ, ເດືອນ, ປີ, ສະຖານທີ່) ຂອງອໍານາດການປົກຄອງທີ່ກ່ຽວຂ້ອງ 2 ສະບັບ.

10. <u>ການຍົກຍ້າຍຖິ່ນຖານ ຂອງ ພະນັກງານເສຍອົງຄະ</u> :

- ໃບຄໍາຮ້ອງຂອງຜູ້ກ່ຽວ.
- ມີໜັງສືຮັບຮອງຈາກບ່ອນທີ່ຜູ້ກ່ຽວຈະຍ້າຍໄປຢູ່.
- ປະຫວັດຫຍໍ້ຂອງພະນັກງານເສຍອົງຄະ.
- ສໍາເນົາບັດເສຍອົງຄະ.
- ສໍາເນົາບັດປະຈໍາຕົວ ແລະ ສໍາມະໂນຄົວ.
- ໃບຢຸດຈ່າຍເງິນອຸດໜູນເສຍອົງຄະ.
- ມີສະໂນດນໍາສົ່ງ ຈາກພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫລວງ ໃຫ້ກົມ ບໍານານ ເສຍອົງຄະ ແລະ ພິການ 2 ຊຸດ.

VII. <u>ໃນການຢັ້ງຢືນເອກະສານຂອງທຸກໆເປົ້າໝາຍ ທີ່ສະເໜີ ຄົ້ນຄ້ວາແກ້ໄຂນະໂຍບາຍຕ່າງໆ ຕາມທີ່ໄດ້ ລະບຸໄວ້ໃນດໍາລັດສະບັບນີ້ ໄດ້ກໍານົດອອກເປັນ 2 ຂັ້ນດັ່ງລຸ່ມນີ້</u> :

1. <u>ຂັ້ນສູນກາງ</u> :

- ກົມຈັດຕັ້ງ - ພະນັກງານ ຂອງກະຊວງ ຫຼື ອົງການທີ່ກ່ຽວຂ້ອງ.
- ຄະນະຄົ້ນຄ້ວາ ການປະຕິບັດນະໂຍບາຍ ຂອງກະຊວງ, ອົງການທີ່ກ່ຽວຂ້ອງ.
- ຂໍ້ຕົກລົງຂອງລັດຖະມົນຕີ, ຫົວໜ້າອົງການທີ່ກ່ຽວຂ້ອງ.
- ໜັງສືສະເໜີເຖິງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

2. <u>ຂັ້ນນະຄອນຫລວງ, ແຂວງ</u> :

- ຢັ້ງຢືນທີ່ຢູ່ຂອງບ້ານ.
- ຢັ້ງຢືນຈາກ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ຈັດຕັ້ງເມືອງ.
- ການຮັບຮອງເປັນເອກະພາບ ຂອງຄະນະຮັບຜິດຊອບ ການປະຕິບັດນະໂຍບາຍ ຢູ່ຂັ້ນນະຄອນຫລວງ,ແຂວງ.
- ຢັ້ງຢືນຈາກພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງ, ແຂວງ, ຄະນະຈັດຕັ້ງນະຄອນຫລວງ ແລະ ແຂວງ.
- ຂໍ້ຕົກລົງຂອງ ເຈົ້າຄອງນະຄອນຫລວງ, ເຈົ້າແຂວງ.
- ໜັງສືສະເໜີເຖິງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

VIII. <u>ງົບປະມານ ເພື່ອຈັດຕັ້ງປະຕິບັດນະໂຍບາຍ</u> :

1. ງົບປະມານລວມ ຂອງລັດຖະບານໃນແຕ່ລະປີ .
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງໃນສັງຄົມ ເຊັ່ນ : ບໍລິສັດ,

ຫ້າງຮ້ານ, ຫົວໜ່ວຍທຸລະກິດຕ່າງໆ ແລະ ອື່ນໆ.

## IX. <u>ມາດຕະການ ໃນການຈັດຕັ້ງປະຕິບັດ</u> :

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ(ກົມບໍານານ, ເສຍອົງຄະ ແລະ ພິການ)ເປັນຜູ້ຄົ້ນຄວ້າດ້ານນະໂຍບາຍ ແລະ ຮັງລວມແຜນງົບປະມານປະຈໍາປີ ເພື່ອມອບໃຫ້ ກົມປະກັນສັງຄົມພາກລັດ ( ອ ປ ລ ).
2. ບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ສະຫະພັນນັກຮົບເກົ່າແຫ່ງຊາດ, ນະຄອນຫລວງວຽງຈັນ ແລະ ບັນດາແຂວງ ( ພະແນກແຮງງານ ແລະ ສະຫວັດດີການສັງຄົມ ) ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ ບົດແນະນໍາສະບັບນີ້ຕາມໜ້າທີ່ຂອງໃຜລາວໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.
3. ຖ້າບຸກຄົນ ຫລື ການຈັດຕັ້ງໃດ ຫາກເຊັນຢັ້ງຢືນ ຫລື ປອມແປງເອກະສານ ທີ່ບໍ່ຖືກຕ້ອງຕາມດໍາລັດ ແລະ ບົດແນະນໍາສະບັບນີ້ ຈະໄດ້ສະລະສິດ ແລະ ຖືກກ່າວເຕືອນຕາມສະຖານໜັກ ຫລື ເບົາ.
4. ຖ້າທ່ານໃດ ແມ່ນພະນັກງານອາວຸໂສທີ່ເຂົ້າການປະຕິວັດແຕ່ປີ1954 ຄືນຫລັງທັງເປັນວິລະຊົນແຫ່ງ ຊາດ ຫລື ນັກຮົບແຂ່ງຂັນ ທີ່ບໍ່ທັນໄດ້ຮັບນະໂຍບາຍຈາກພັກ - ລັດໃນເມື່ອກ່ອນ ໃຫ້ເລືອກເອົາ ແຕ່ອັນດຽວທີ່ສູງກວ່າ.
5. ການປະກອບເອກະສານບໍ່ຄົບຕາມທີ່ໄດ້ກໍານົດ ຢູ່ໃນ ຂໍ້ VI ຂອງບົດແນະນໍາສະບັບນີ້ຈະບໍ່ໄດ້ຮັບພິຈາລະນາ.
6. ທ່ານໃດທີ່ໄດ້ຮັບນະໂຍບາຍຕາມ ດໍາລັດ71/ນຍ(ເກົ່າ) ແລະ ດໍາລັດ194/ນຍ(ເກົ່າ) ຫລືຜູ້ກ່ຽວ ໄດ້ມີນະໂຍບາຍທັນເຮືອນ, ລົດ ແລະ ສິດນໍາໃຊ້ທີ່ດິນຂອງລັດຄຸ້ມຄອງ ແລ້ວ, ຈະບໍ່ໄດ້ຮັບພິຈາລະ ນາ ຕາມດໍາລັດ343/ນຍ, ແຕ່ປະການໃດ.
7. ຄໍາແນະນໍາ ສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກໍານົດ, ບົດແນະນໍາທີ່ ຂັດກັບຄໍາແນະນໍາສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ
ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອ່ອນຈັນ ທໍາມະວົງ